ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 14 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 13 ກໍລະກົດ 2023

# ໜັງສືແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ

**ເລື່ອງ:** ການນຳເງິນສົດເຂົ້າ-ອອກ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ-ເຂົ້າ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019;
- ອີງຕາມໜັງສືລາຍງານຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 104/ກຄງຕ, ລົງວັນທີ 05 ກໍລະກົດ 2022.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ-ເຂົ້າ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019 ໃຫ້ສອດຄ່ອງກັບສະພາບເສດຖະກິດປັດຈຸບັນ ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການນຳເງິນສົດເປັນເງິນກີບ ແລະ ເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ **ໄດ້ຈາກວົງເງິນ ບໍ່ເກີນ ຫຼື ທຽບເທົ່າ 100 ລ້ານກີບ ໃນເມື່ອກ່ອນ ມາເປັນວົງເງິນ ບໍ່ເກີນ ຫຼື ທຽບເທົ່າ 150 ລ້ານກີບ.** ຖ້ານຳເງິນສົດເຂົ້າເກີນຈຳນວນດັ່ງກ່າວ ຜູ້ກ່ຽວຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານສາກົນ ເພື່ອອອກໃບຢັ້ງຢືນການນຳເງິນສົດຈຳນວນທີ່ເກີນນັ້ນເຂົ້າ ສປປ ລາວ ໂດຍປະກອບຂໍ້ມູນຕາມແບບພິມໃບແຈ້ງເຄື່ອງຕິດຕົວຜູ້ໂດຍສານ ຂອງກົມພາສີ ກະຊວງການເງິນ ແລະ ຖ້ານຳເງິນສົດອອກເກີນຈຳນວນດັ່ງກ່າວ ຜູ້ກ່ຽວຕ້ອງມາຂໍອະນຸຍາດນຳ ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ ຫຼື ນຳ ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ໂດຍປະກອບຂໍ້ມູນຕາມແບບພິມ ຂອງທະນາຄານແຫ່ງ ສປປ ລາວ ເພື່ອອອກໃບອະນຸຍາດນຳເງິນສົດຈຳນວນທີ່ເກີນນັ້ນ.

ແຈ້ງການສະບັບນີ້ໃຫ້ໃຊ້ປ່ຽນແທນ **ວັກທີ ໜຶ່ງ ແລະ ທີ ສອງ ໃນມາດຕາ 10** ໃນການນຳເງິນສົດເຂົ້າ-ອອກ ສປປ ລາວ ຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ-ເຂົ້າ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ບຸນເຫຼືອ ສິນໄຊວໍຣະວົງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**